ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 287 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 25 SEP 2020

**ເຖິງ** : ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.

**ເລື່ອງ**: ເລື່ອນໄລຍະເວລາການສົ່ງເອກກະສານສະເໜີຄຸນວຸດທິ ໂຄງການກໍ່ສ້າງ Data Certer.

- ອີງຕາມໜັງສືແຈ້ງເຊີນຍື່ນເອກກະສານເພື່ອຄັດເລືອກດ້ານຄຸນວຸດທິຂອງ ທຄຕລ ເລກທີ: 070/ ທຄຕລ.2020, 3/9/2020;
- ອີງຕາມມະຕິກອງປະຊຸມຂອງຄະນະອຳນວຍການຄັ້ງວັນທີ: 21/9/2020.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງທີ່ໄດ້ມາເອົາ ແລະ ຍັງບໍ່ທັນໄດ້ມາເອົາເອກະສານສະເໜີຄຸນວຸດທິຂອງບໍລິສັດ ໂຄງການກໍ່ສ້າງ Data Center ທຄຕລ ຊາບວ່າ ອີງໃສ່ການລະບາດພະຍາດ Covid 19 ທຄຕລ ຈະໄດ້ເລື່ອນມື້ປິດຮັບເອກກະສານອອກໄປອີກ 2 ເດືອນ (ປິດຮັບວັນທີ 01/12/2020 ເວລາ 16:00 ໂມງ).

ເພື່ອຄວາມເຂົ້າໃຈ ບໍລິສັດຮັບເໝົາກໍ່ສ້າງຕ້ອງແມ່ນບໍລິສັດທີ່ຂຶ້ນທະບຽນ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ໃນ ສປປ ລາວ ເປັນຫຼັກ ບໍລິສັດດັ່ງກ່າວສາມາດຮ່ວມມືກັບບໍລິສັດຕ່າງປະເທດທີ່ມີວິຊາການໄດ້ຮັບການຢັ້ງຢືນດ້ານວິຊາສະເພາະ ແລະ ມີປະສົບການ ດ້ານການກໍ່ສ້າງ Data Center ມາກ່ອນ.

ດັ່ງນັ້ນ ຈິ່ງແຈ້ງມາຍັງບັນດາ ບໍລິສັດ ເພື່ອຮັບຊາບດ້ວຍ.

ຣ **ຜູ້ອຳນວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ສຸພັກ ຖິ່ນໄຊພອນ

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA